ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 258 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 30 ກໍລະກົດ 2019

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍອາກອນຊົມໃຊ້

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 12/ສພຊ, ລົງວັນທີ 19 ມິຖຸນາ 2019 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍອາກອນຊົມໃຊ້;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 18/ຄປຈ, ລົງວັນທີ 17 ກໍລະກົດ 2019.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍອາກອນຊົມໃຊ້.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 12 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 19 / 06 / 19

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍອາກອນຊົມໃຊ້

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ໃນວາລະກອງປະຊຸມ ຄັ້ງວັນທີ 19 ມິຖຸນາ 2019.

ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍອາກອນຊົມໃຊ້ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 68 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 19 ມິຖຸນາ 2019

# ກົດໝາຍ
# ວ່າດ້ວຍອາກອນຊົມໃຊ້

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານອາກອນຊົມໃຊ້ ເພື່ອໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ເກັບລາຍຮັບ ແລະ ມອບພັນທະ ເຂົ້າງົບປະມານແຫ່ງລັດ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ, ດັດສົມການຊົມໃຊ້ໃນສັງຄົມ, ປົກປ້ອງສຸຂະພາບຂອງພົນລະເມືອງ ແລະ ປົກປັກຮັກສາສິ່ງແວດລ້ອມ, ສ້າງເງື່ອນໄຂໃຫ້ແກ່ການເຊື່ອມໂຍງ ເຂົ້າກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ອາກອນຊົມໃຊ້**

ອາກອນຊົມໃຊ້ ແມ່ນ ພັນທະເປັນເງິນ ທີ່ເກັບຈາກ ການຊົມໃຊ້ບາງປະເພດ ສິນຄ້າ ທີ່ນຳເຂົ້າ ຫຼື ຜະລິດພາຍໃນ ແລະ ການບໍລິການ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ພາຍໃນປະເທດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິນຄ້າ** ໝາຍເຖິງ ຜະລິດຕະພັນທີ່ມີຕົວຕົນ ຫຼື ບໍ່ມີຕົວຕົນ ຊຶ່ງສາມາດເຄື່ອນຍ້າຍໄດ້ ຫຼື ບໍ່ສາມາດເຄື່ອນຍ້າຍໄດ້ ລວມທັງຊັບສິນບັດຄົງທີ່, ກະແສໄຟຟ້າ, ອາຍແກັດ, ພະລັງງານ ແລະ ຊັບສິນບັດອື່ນ ທີ່ໃຊ້ເຂົ້າໃນການຜະລິດ, ການຂາຍ, ການແລກປ່ຽນ ແລະ ການບໍລິການ;
2. **ການນຳເຂົ້າ** ໝາຍເຖິງ ການນຳເອົາສິນຄ້າຈາກຕ່າງປະເທດເຂົ້າມາ ສປປ ລາວ ລວມທັງການນຳເຂົ້າສິນຄ້າ ຈາກເຂດເສດຖະກິດພິເສດ;
3. **ການສະໜອງສິນຄ້າ** ໝາຍເຖິງ ການມອບ, ການໂອນສິດຊົມໃຊ້ສິນຄ້າ ໃຫ້ແກ່ຜູ້ອື່ນ ໂດຍໄດ້ຮັບຄ່າຕອບແທນເປັນເງິນ ຫຼື ຜົນປະໂຫຍດອື່ນ ລວມທັງການໃຫ້ລ້າ ແລະ ການຊົມໃຊ້ດ້ວຍຕົນເອງ;

4. **ການສະໜອງການບໍລິການ** ໝາຍເຖິງ ການເຄື່ອນໄຫວທຸລະກິດທີ່ເປັນການສະໜອງແຮງງານໃຫ້ແກ່ຜູ້ຊື້ການບໍລິການ ຫຼື ຜູ້ອື່ນ ຊຶ່ງອາດມີ ວັດຖຸປະກອບ ແລະ ພາຫະນະຮັບໃຊ້ ໂດຍໄດ້ຮັບຄ່າຕອບແທນເປັນເງິນ ຫຼື ຜົນປະໂຫຍດອື່ນ ລວມທັງການໃຫ້ເຊົ່າ ແລະ ການຊົມໃຊ້ດ້ວຍຕົນເອງ;

5. **ຜູ້ມີພູມລຳເນົາ** ໝາຍເຖິງ ຜູ້ທຳມາຫາກິນ ຫຼື ດຳເນີນທຸລະກິດ ທີ່ດຳລົງຊີວິດ ແລະ ມີທີ່ຢູ່ຖາວອນ ຢູ່ ສປປ ລາວ;

6. **ຜູ້ບໍ່ມີພູມລຳເນົາ** ໝາຍເຖິງ ຜູ້ທຳມາຫາກິນ ຫຼື ດຳເນີນທຸລະກິດ ຢູ່ ສປປ ລາວ ແຕ່ບໍ່ດຳລົງຊີວິດ ແລະ ບໍ່ມີທີ່ຢູ່ຖາວອນ;

7. **ຍານພາຫະນະ** ໝາຍເຖິງ ລົດຈັກ, ລົດໃຫຍ່, ລົດຂົນສົ່ງ, ລົດໄຟ, ເຮືອ, ເຮືອບິນ ແລະ ວັດຖຸ ຫຼື ສິ່ງປະດິດທີ່ບໍ່ແມ່ນສິ່ງທີ່ມີຊີວິດ, ສາມາດເຄື່ອນຍ້າຍຂົນສົ່ງໄດ້ ຊຶ່ງມະນຸດເປັນຜູ້ສ້າງຂຶ້ນ;

8. **ລົດຈັກ** ໝາຍເຖິງ ຍານພາຫະນະທີ່ຂັບເຄື່ອນດ້ວຍ ສອງລໍ້ ຫາ ສາມລໍ້ ຊຶ່ງແລ່ນດ້ວຍເຄື່ອງຈັກ ທີ່ນຳໃຊ້ພະລັງງານເຊື້ອໄຟ ຫຼື ພະລັງງານສະອາດ;

9. **ລົດໃຫຍ່** ໝາຍເຖິງ ຍານພາຫະນະທີ່ຂັບເຄື່ອນດ້ວຍ ສີ່ລໍ້ ຂຶ້ນໄປ ຊຶ່ງແລ່ນດ້ວຍເຄື່ອງຈັກ ທີ່ນຳໃຊ້ພະລັງງານເຊື້ອໄຟ ຫຼື ພະລັງງານສະອາດ ເປັນຕົ້ນ ລົດເກັງ, ລົດກະບະ, ລົດຕູ້, ລົດຂົນສົ່ງ, ລົດຈັກສີ່ລໍ້-ATV, ລົດໂກຄາດ, ລົດກ໊ອຟ, ລົດຮັບໃຊ້ສະໜາມກ໊ອຟ, ລົດຮັບໃຊ້ສະເພາະຢູ່ໃນສະຖານທີ່ທ່ອງທ່ຽວ, ລົດຕູ້ແຊເຢັນ, ລົດຫົວລາກ, ລົດຫາງລາກ, ລົດເຄິ່ງຫາງລາກ, ລົດບັນທຸກ ຂອງແຫຼວ ຫຼື ອາຍແກັດ ຫຼື ຊີມັງຜົງ, ລົດບັນທຸກນ້ຳມັນ, ລົດນ້ຳ, ລົດເຄຣນ, ລົດຟອກລິບ, ລົດໄມ້ຊີມັງ, ລົດດູດວິດ, ລົດສີດຊີມັງ, ລົດສີດພົ່ນທຸກຊະນິດ ແລະ ລົດເຮືອນເຄື່ອນທີ່;

10. **ລົດຂົນສົ່ງຂະໜາດນ້ອຍ** ໝາຍເຖິງ ລົດຂົນສົ່ງຜູ້ໂດຍສານ ຊຶ່ງມີບ່ອນນັ່ງທັງໝົດບໍ່ເກີນ ເກົ້າຄົນ ແລະ ລົດຂົນສົ່ງສິນຄ້າ ຊຶ່ງມີນ້ຳໜັກທັງໝົດ ບໍ່ເກີນ ສາມໂຕນເຄິ່ງ;

11. **ລົດຂົນສົ່ງຂະໜາດກາງ** ໝາຍເຖິງ ລົດຂົນສົ່ງຜູ້ໂດຍສານ ຊຶ່ງມີບ່ອນນັ່ງແຕ່ ສິບ ຫາ ສາມສິບຫ້າຄົນ ແລະ ລົດຂົນສົ່ງສິນຄ້າ ຊຶ່ງມີນ້ຳໜັກເກີນ ສາມໂຕນເຄິ່ງ ຫາ ສິບຫ້າໂຕນ;

12. **ລົດຂົນສົ່ງຂະໜາດໃຫຍ່** ໝາຍເຖິງ ລົດຂົນສົ່ງຜູ້ໂດຍສານ ຊຶ່ງມີບ່ອນນັ່ງທັງໝົດແຕ່ ສາມສິບຫົກຄົນຂຶ້ນໄປ ແລະ ລົດຂົນສົ່ງສິນຄ້າ ຊຶ່ງມີນ້ຳໜັກເກີນ ສິບຫ້າໂຕນຂຶ້ນໄປ;

13. **ພະລັງງານເຊື້ອໄຟ** ໝາຍເຖິງ ນ້ຳມັນເຊື້ອໄຟທຸກຊະນິດ, ອາຍແກັສ ແລະ ສິ່ງອື່ນ ທີ່ພາໃຫ້ເຄື່ອງຈັກເກີດຄວາມແຮງດ້ວຍການນຳໃຊ້ພະລັງງານທີ່ເປັນທາດແຫຼວ;

14. **ພະລັງງານສະອາດ** ໝາຍເຖິງ ພະລັງງານໄຟຟ້າ, ພະລັງງານແສງຕາເວັນ, ພະລັງງານລົມ ແລະ ພະລັງງານທົດແທນອື່ນ ທີ່ບໍ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

15. **ຍານພາຫະນະທີ່ນຳໃຊ້ພະລັງງານສະອາດ** ໝາຍເຖິງ ຍານພາຫະນະທີ່ອອກແບບສະເພາະທີ່ນຳໃຊ້ພະລັງງານສະອາດໂດຍກົງ ຊຶ່ງບໍ່ລວມເອົາຍານພາຫະນະທີ່ນຳໃຊ້ພະລັງງານ ສອງລະບົບ ເປັນຕົ້ນ ນ້ຳມັນເຊື້ອໄຟ ແລະ ພະລັງງານທົດແທນອື່ນ (ລະບົບຮາຍບຣິດ - Hybrid, ລະບົບໄຮໂດຣເຈນ- Hydrogen);

16. **ລົດກົນຈັກໜັກ** ໝາຍເຖິງ ລົດດູດ, ລົດໄລ, ລົດຈົກ, ລົດຕັກ, ລົດເກດ, ລົດຕອກເສົາເຂັມ ແລະ ລົດກົນຈັກໜັກອື່ນ;

17. **ກົນຈັກຮັບໃຊ້ສະເພາະການຜະລິດກະສິກຳ** ໝາຍເຖິງ ລົດໄຖ, ລົດຄາດ, ລົດປັກດຳ, ລົດກ່ຽວ, ລົດຫວ່ານ, ລົດປອດເມັດ ຫຼື ປອດລຳ ແລະ ກົນຈັກອື່ນທີ່ຄ້າຍຄຽງ ຊຶ່ງບໍ່ລວມລົດຂົນສົ່ງຜົນຜະລິດກະສິກຳ;

18. **ເຄື່ອງດື່ມສຳເລັດຮູບ** ໝາຍເຖິງ ຜະລິດຕະພັນ ທີ່ໄດ້ຜ່ານການປຸງແຕ່ງ, ການຫຸ້ມຫໍ່ ແລະ ຕິດສະຫຼາກ ດື່ມດຳ ແມ່ນເພື່ອໃຫ້ເຂົ້າໃນການເສີມສ້າງບາງຈຸລັງໃນຮ່າງກາຍ ແຕ່ບໍ່ໄດ້ນຳໃຊ້ ເພື່ອປ້ອງກັນ ແລະ ປິ່ນປົວພະຍາດ;

19. **ເຄື່ອງດື່ມອື່ນທີ່ຄ້າຍຄຽງ** ໝາຍເຖິງ ເຄື່ອງດື່ມທີ່ມີຄຸນລັກສະນະສະເພາະພື້ນຖານ ທີ່ຄືກັນ ຫຼື ຄ້າຍຄືກັນກັບເຄື່ອງດື່ມສຳເລັດຮູບທີ່ຜະລິດໃນ ສປປ ລາວ ເປັນຕົ້ນ ການນຳໃຊ້, ຄຸນນະພາບ, ສ່ວນປະກອບ;

20. **ຜະລິດຕະພັນເຄື່ອງສຳອາງ** ໝາຍເຖິງ ສິ່ງປຸງແຕ່ງໃດໜຶ່ງທີ່ໃຊ້ ທາ, ນວດ, ຂັດ, ສີດພົ່ນໃສ່ ພາກສ່ວນໃດໜຶ່ງຂອງຮ່າງກາຍ ເຊັ່ນ ຜິວໜັງ, ຜົມ, ແຂ້ວ, ເລັບ, ປາກ ເພື່ອທຳຄວາມສະອາດ, ເຮັດໃຫ້ກິ່ນຫອມ ແລະ ສວຍງາມ;

21. **ອຸປະກອນເສີມຄວາມງາມ** ໝາຍເຖິງ ເຄື່ອງມືການແພດທີ່ເປັນເຄື່ອງໃຊ້, ເຄື່ອງຈັກ, ວັດຖຸໃນ ສະພາບແຫຼວ, ແຂງ, ເປັນອາຍ, ເປັນແສງ ທີ່ໃຊ້ໃນການບົ່ງມະຕິ ຫຼື ໃຊ້ໃນການສັມຜັດກັບຮ່າງກາຍຂອງຄົນ;

22. **ນ້ຳມັນເຊື້ອໄຟ** ໝາຍເຖິງ ນ້ຳມັນແອັດຊັງ, ນ້ຳມັນກາຊວນ, ນ້ຳມັນກາດເຮືອບິນ, ນ້ຳມັນກາດ ໄຕ, ນ້ຳມັນເຕົາ, ນ້ຳມັນເຊື້ອໄຟຊີວະພາບ ແລະ ນ້ຳມັນເຊື້ອໄຟອື່ນ ຕາມການກຳນົດຂອງອົງການຄຸ້ມຄອງທຸລະ ກິດນ້ຳມັນເຊື້ອໄຟ;

23. **ຊິ້ນສ່ວນປະກອບພາຫະນະ** ໝາຍເຖິງ ຊິ້ນສ່ວນທີ່ຈຳເປັນພື້ນຖານ ເພື່ອຮັບປະກັນມາດຕະຖານ ດ້ານເຕັກນິກຂອງພາຫະນະ ແຕ່ບໍ່ລວມເອົາຊິ້ນສ່ວນປະກອບສຳລັບຕົບແຕ່ງຄວາມສວຍງາມ ຫຼື ຄວາມບັນເທີງ ຫຼື ເພື່ອຈຸດປະສົງອື່ນ;

24. **ເຄື່ອງອາໄຫຼ່ປ່ຽນຖ່າຍພາຫະນະ** ໝາຍເຖິງ ເຄື່ອງອາໄຫຼ່ ທີ່ຈຳເປັນພື້ນຖານ ເພື່ອຮັບປະກັນ ມາດຕະຖານດ້ານເຕັກນິກຂອງພາຫະນະ;

25. **ຊີບີຢູ** (Completely Built Unit-CBU) ໝາຍເຖິງ ພາຫະນະເປັນຄັນສຳເລັດຮູບ ທີ່ສາ ມາດຈຳໜ່າຍໃຫ້ຜູ້ຊົມໃຊ້ໄດ້ເລີຍ;

26. **ຊີເຄດີ** (Completely Knocked Down-CKD) ໝາຍເຖິງ ຊິ້ນສ່ວນປະກອບພາຫະນະ ເປັນຊຸດຄັນຄົບຖ້ວນ ເພື່ອມາປະກອບເປັນຄັນ ແລ້ວຈຶ່ງຈຳໜ່າຍໃຫ້ຜູ້ຊົມໃຊ້;

27. **ໄອເຄດີ** (Incompletely Knocked Down-IKD) ໝາຍເຖິງ ຊິ້ນສ່ວນປະກອບພາຫະນະເປັນ ຊຸດຄັນບໍ່ຄົບຖ້ວນ ເພື່ອມາປະກອບໃສ່ກັບຊິ້ນສ່ວນຜະລິດພາຍໃນປະເທດ ໃຫ້ເປັນພາຫະນະສຳເລັດຮູບ ແລະ ສາ ມາດຈຳໜ່າຍໃຫ້ຜູ້ຊົມໃຊ້ໄດ້;

28. **ເຄື່ອງຕົບແຕ່ງພາຫະນະ** ໝາຍເຖິງ ອຸປະກອນ ຫຼື ຊິ້ນສ່ວນປະກອບເພີ່ມເຕີມ ເພື່ອຈຸດປະສົງຂອງ ຄວາມສວຍງາມ, ຄວາມບັນເທີງ ຫຼື ຈຸດປະສົງອື່ນ ທີ່ບໍ່ເປັນພື້ນຖານເພື່ອຮັບປະກັນດ້ານເຕັກນິກຂອງພາຫະນະ;

29. **ອາກອນເດັດຖານ** ໝາຍເຖິງ ອາກອນທີ່ເກັບເປັນຈຳນວນເງິນຕໍ່ຫົວໜ່ວຍໃດໜຶ່ງ ທີ່ບໍ່ແມ່ນການ ກຳນົດເປັນອັດຕາສ່ວນຮ້ອຍ;

30. **ເຈົ້າໜ້າທີ່ສ່ວຍສາອາກອນ** ໝາຍເຖິງ ພະນັກງານສ່ວຍສາອາກອນ ທີ່ຖືກແຕ່ງຕັ້ງໃຫ້ເຄື່ອນໄຫວ ຫຼື ປະຕິບັດໜ້າທີ່ ຢູ່ສະຖານທີ່ສະເພາະ ຫຼື ວຽກງານສະເພາະກິດໃດໜຶ່ງ ແລະ ມີຖານະເປັນເຈົ້າໜ້າທີ່ສືບສວນ-ສອບ ສວນ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານອາກອນຊົມໃຊ້

ລັດ ວາງນະໂຍບາຍກ່ຽວກັບອາກອນຊົມໃຊ້ ເພື່ອດັດສົມການຊົມໃຊ້ສິນຄ້າ ແລະ ການບໍລິການ ຂອງ ສັງຄົມ, ປົກປ້ອງສຸຂະພາບຂອງພົນລະເມືອງ, ປົກປັກຮັກສາສິ່ງແວດລ້ອມ ແລະ ປະກອບສ່ວນພັດທະນາເສດຖະ ກິດ-ສັງຄົມ ຂອງຊາດ.

ລັດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຄຸ້ມຄອງວຽກງານອາກອນຊົມໃຊ້ ດ້ວຍການ ປະກອບບຸກຄະລາກອນ, ສະໜອງງົບປະມານ, ໂຄງລ່າງພື້ນຖານ, ພາຫະນະ ແລະ ອຸປະກອນຮັບໃຊ້, ພັດທະນາ ລະບົບການແຈ້ງເສຍ, ການມອບ ແລະ ການຈັດເກັບອາກອນຊົມໃຊ້ ໃຫ້ມີຄວາມສະດວກ, ທັນສະໄໝ ໂດຍ ສອດຄ່ອງກັບສະພາບເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

ລັດ ສ້າງສະພາບແວດລ້ອມທີ່ດີ ໃຫ້ແກ່ຜູ້ດຳເນີນທຸລະກິດ ໃນການເສຍອາກອນຊົມໃຊ້.

**ມາດຕາ 5 ຫຼັກການກ່ຽວກັບວຽກງານອາກອນຊົມໃຊ້**

ໃນການເຄື່ອນໄຫວວຽກງານອາກອນຊົມໃຊ້ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ, ນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ເກັບລາຍຮັບເຂົ້າງົບປະມານແຫ່ງລັດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ມີຄວາມຍຸຕິທຳ, ຖືກຕ້ອງ, ຄົບຖ້ວນ, ວ່ອງໄວ, ໂປ່ງໃສ ແລະ ສາມາດກວດສອບໄດ້;
4. ອຳນວຍຄວາມສະດວກ ໃຫ້ຜູ້ເສຍອາກອນຊົມໃຊ້ ຢ່າງສະເໝີພາບ ຕາມກົດໝາຍ;
5. ປະສານສົມທົບກັບກະຊວງ, ອົງການ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 6 ພັນທະກ່ຽວກັບອາກອນຊົມໃຊ້**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຊົມໃຊ້ບາງປະເພດສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ ລ້ວນແຕ່ມີພັນທະເສຍອາກອນຊົມໃຊ້ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ ຊົມໃຊ້ບາງປະເພດ ສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານອາກອນຊົມໃຊ້ ດ້ວຍການແລກປ່ຽນບົດຮຽນ ທາງດ້ານເຕັກນິກ, ວິຊາການ, ຂໍ້ມູນ ຂ່າວສານ, ພັດທະນາຊັບພະຍາກອນມະນຸດ ແລະ ດ້ານອື່ນ ເພື່ອພັດທະນາວຽກງານດັ່ງກ່າວ, ປະຕິບັດຕາມ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການເກັບ ແລະ ການຄືນໃຫ້ ອາກອນຊົມໃຊ້
### ໝວດທີ 1
### ການເກັບອາກອນຊົມໃຊ້

**ມາດຕາ 9 ການເກັບອາກອນຊົມໃຊ້**

ການເກັບອາກອນຊົມໃຊ້ ແມ່ນ ການເກັບອາກອນຈາກ ການຊົມໃຊ້ບາງປະເພດສິນຄ້າ ທີ່ນຳເຂົ້າ ຫຼື ຜະລິດພາຍໃນ ຫຼື ການບໍລິການ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ພາຍໃນປະເທດ ຕາມອັດຕາທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 10 ຜູ້ມອບອາກອນຊົມໃຊ້**

ຜູ້ມອບອາກອນຊົມໃຊ້ ມີ ດັ່ງນີ້:

1. ຜູ້ນຳເຂົ້າສິນຄ້າ;

2. ຜູ້ຜະລິດສິນຄ້າ;

3. ຜູ້ສະໜອງການບໍລິການ;

4. ຜູ້ຊື້ບໍລິການຈາກຜູ້ບໍ່ມີພູມລຳເນົາ.

**ມາດຕາ 11 ສິນຄ້າ ແລະ ການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້**

ກ. ສິນຄ້າ ທີ່ຕ້ອງເສຍອາກອນຊົມໃຊ້ ມີ ດັ່ງນີ້:

1. ນ້ຳມັນເຊື້ອໄຟ;
2. ພາຫະນະ: ລົດຈັກ ແລະ ລົດໃຫຍ່;
3. ຊິ້ນສ່ວນປະກອບພາຫະນະ;
4. ເຄື່ອງອາໄຫຼ່ປ່ຽນຖ່າຍພາຫະນະ;
5. ເຄື່ອງຕົບແຕ່ງພາຫະນະ;
6. ເຫຼົ້າ, ເຄື່ອງດື່ມທີ່ມີທາດເຫຼົ້າ;
7. ເບຍ;
8. ຢາສູບ: ເປັນເສັ້ນ, ເປັນຊອງ, ຢາຊີກາ, ຢາສູບໄຟຟ້າ, ນ້ຳຢາທີ່ມີສ່ວນປະສົມຂອງນິໂກຕິນ ສຳລັບໃຊ້ກັບຢາສູບໄຟຟ້າ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ;
9. ອາຍແກັດສ໌ໃຊ້ສຳລັບຍານພາຫະນະ;
10. ເຄື່ອງດື່ມສຳເລັດຮູບ ເຊັ່ນ ນ້ຳອັດລົມ, ໂຊດາ, ເຄື່ອງດື່ມຊູກຳລັງ;
11. ເຄື່ອງແກ້ວຄຣິດສະຕັນທີ່ເປັນເຄື່ອງໃຊ້ ແລະ ປະດັບ, ໂຄມໄຟປະດັບ;
12. ຜ້າພົມທີ່ເຮັດດ້ວຍຂົນແກະ ຫຼື ຂົນລະອຽດຂອງສັດ;
13. ນ້ຳຫອມ, ຜະລິດຕະພັນເຄື່ອງສຳອາງ, ອຸປະກອນຮັບໃຊ້ການເສີມສວຍ ແລະ ເສີມຄວາມງາມ;
14. ໄພ້ ແລະ ເຄື່ອງຫຼິ້ນການພະນັນ ທຸກຊະນິດ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ;
15. ບັ້ງໄຟ, ດອກໄມ້ໄຟ, ໝາກກະໂພກ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ;
16. ເຮືອໄວ, ເຮືອຢັອດ ແລະ ເຮືອກິລາທີ່ແລ່ນດ້ວຍເຄື່ອງຈັກ;
17. ອຸປະກອນຮັບສັນຍານໂທລະພາບຜ່ານດາວທຽມ (ຈານດາວທຽມ, ກ່ອງຮັບສັນຍານ);
18. ເຄື່ອງຫຼິ້ນສຽງ ແລະ ພາບ, ກ້ອງຖ່າຍຮູບ, ໂທລະສັບ, ເຄື່ອງອັດສຽງ ແລະ ພາບ, ເຄື່ອງດົນຕີ;
19. ເຮືອບິນບໍ່ມີຄົນຂັບ, ເຄື່ອງຖ່າຍພາບທາງອາກາດ, ເຄື່ອງບິນດ້ວຍຈ້ອງ ແລະ ເຄື່ອງຈັກໄອພົ່ນຂະໜາດນ້ອຍ;
20. ໂຕະບິນລຽດ, ໂຕະສະນຸກເກີ້, ອຸປະກອນໂບລິ້ງ, ໂຕະຫຼິ້ນບານເຕະ;
21. ເຄື່ອງຫຼິ້ນເກມທຸກປະເພດ ເຊັ່ນ ເພລສະເຕຊັນ ເອັກບັອກ.

ຂ. ການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້ ມີ ດັ່ງນີ້:

1. ການບັນເທີງ: ໂຮງເຕັ້ນລຳ, ດິດສະໂກ້ເທັກ, ຄາຣາໂອເກະ;
2. ກິດຈະການໂບລິ້ງ;
3. ກິດຈະການສັນຍະກຳເສີມຄວາມງາມ;
4. ກິດຈະການການບໍລິການໂທລະສັບ, ສັນຍານໂທລະພາບສາຍໄຍ, ສັນຍານໂທລະພາບດີຈີຕອນ,
5. ກິດຈະການການບໍລິການອິນເຕີເນັດ;
6. ກິດຈະການສະໜາມກ໊ອຟ;
7. ກິດຈະການຫວຍ ທີ່ໄດ້ຮັບອະນຸຍາດຖືກຕ້ອງ;
8. ກິດຈະການ ກາຊີໂນ, ຕູ້ເກມຢອດຫຼຽນ ແລະ ຫຼິ້ນເກມທຸກປະເພດ;

9. ກິດຈະການ ແຂ່ງລົດ, ແຂ່ງມ້າ, ຕີໄກ່;

10. ກິດຈະການ ບາລູນ, ບໍລິການບິນຕ້ອຍຈ້ອງ ຫຼື ຈັກອາຍພື້ນຂະໜາດນ້ອຍ, ບໍລິການຖ່າຍພາບທາງອາກາດ.

**ມາດຕາ 12 ສິນຄ້າ ແລະ ການບໍລິການ ທີ່ຖືກຍົກເວັ້ນອາກອນຊົມໃຊ້**

ສິນຄ້າ ແລະ ການບໍລິການ ທີ່ຖືກຍົກເວັ້ນອາກອນຊົມໃຊ້ ມີ ດັ່ງນີ້:

1. ສິນຄ້າ ທີ່ຖືກເສຍອາກອນຊົມໃຊ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂໍ້ ກ ຂອງກົດໝາຍສະບັບນີ້ ທີ່ເປັນສິນຄ້າຜ່ານແດນ ຫຼື ຜະລິດຢູ່ພາຍໃນທີ່ສົ່ງອອກຕ່າງປະເທດ;

2. ເຫຼົ້າສຳລັບຮັບໃຊ້ວຽກງານການແພດສະເພາະ;

3. ລົດ ແລະ ເຄື່ອງຮັບໃຊ້ ທີ່ນຳເຂົ້າໂດຍສະຖານທູດ, ສະຖານກົງສຸນໃຫຍ່ ແລະ ອົງການຈັດຕັ້ງສາກົນປະຈຳຢູ່ ສປປ ລາວ ຕາມລະບຽບການ;

4. ບັ້ງໄຟ, ດອກໄມ້ໄຟ, ໝາກກະໂພກ ທີ່ການຈັດຕັ້ງຂອງລັດນຳເຂົ້າ ເພື່ອມາຮັບໃຊ້ການສະເຫຼີມສະຫຼອງງານສຳຄັນ ທີ່ເປັນທາງການ;

5. ລົດກູ້ໄພ, ເຮືອບິນກູ້ໄພ, ເຮືອກູ້ໄພ, ລົດຮັບສົ່ງຄົນເຈັບຂອງໂຮງໝໍ, ລົດມອດໄຟ ແລະ ລົດຮັບໃຊ້ສະເພາະວິຊາສະເພາະ ຂອງກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;

6. ກົນຈັກຮັບໃຊ້ສະເພາະການຜະລິດກະສິກຳ;

7. ລົດກົນຈັກໜັກ ເຊັ່ນ ລົດດູດ, ລົດໄຖ, ລົດຈົກ, ລົດຕັກ, ລົດເກດ, ລົດຕອກເສົາເຂັມ ທີ່ຮັບໃຊ້ການຜະລິດໂດຍກົງ ແລະ ເປັນຊັບສົມບັດຄົງທີ່;

8. ພາຫະນະທີ່ນຳເຂົ້າຊົ່ວຄາວ ເພື່ອຮັບໃຊ້ໂຄງການຕາມສັນຍາການລົງທຶນ;

9. ພາຫະນະທີ່ໄດ້ຮັບການຊ່ວຍເຫຼືອຈາກຕ່າງປະເທດ ອີງຕາມສັນຍາການສະໜອງທຶນ;

10. ລົດຈັກທີ່ນຳໃຊ້ພະລັງງານສະອາດ;

11. ຊິ້ນສ່ວນປະກອບພາຫະນະນຳເຂົ້າ ເພື່ອປະກອບຢູ່ໃນລະບົບໂຮງງານພາຍໃນປະເທດ.

## ໝວດທີ 2
## ການຄິດໄລ່ອາກອນຊົມໃຊ້

**ມາດຕາ 13 ວິທີຄິດໄລ່ອາກອນຊົມໃຊ້**

ວິທີຄິດໄລ່ອາກອນຊົມໃຊ້ ໃຫ້ເອົາ ພື້ນຖານຄິດໄລ່ອາກອນຊົມໃຊ້ ຄູນກັບ ອັດຕາອາກອນຊົມໃຊ້.

**ມາດຕາ 14 ພື້ນຖານຄິດໄລ່ອາກອນຊົມໃຊ້**

ພື້ນຖານຄິດໄລ່ອາກອນຊົມໃຊ້ຈາກ ສິນຄ້າ ແລະ ການບໍລິການ ມີ ດັ່ງນີ້:

1. ສິນຄ້ານຳເຂົ້າ ແມ່ນ ມູນຄ່າແຈ້ງເສຍພາສີ (Cost, Insurance and Freight - CIF) ບວກຄ່າພາສີຂາເຂົ້າ ແລະ ຄ່າທຳນຽມອື່ນ (ຖ້າມີ). ສຳລັບເບຍ, ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາສູບ ນຳເຂົ້າ ແມ່ນເກັບອາກອນຊົມໃຊ້ຢູ່ຂອດຂາຍພາຍໃນປະເທດຕື່ມອີກ ຊຶ່ງແມ່ນ ລາຄາຂາຍຍົກ ລົບ ພື້ນຖານຄິດໄລ່ອາກອນຊົມໃຊ້ຢູ່ຂອດຂາເຂົ້າ;

2. ສິນຄ້າ ຜະລິດ ຫຼື ປະກອບ ພາຍໃນ ເພື່ອຈຳໜ່າຍ ແມ່ນ ລາຄາຂາຍຍົກຈາກໂຮງງານ. ສຳລັບສິນຄ້າເພື່ອຊົມໃຊ້ເອງ, ໃຫ້ເປັນຂອງຂ້ອນ, ລາງວັນ, ຂອງແຖມ ແມ່ນ ມູນຄ່າຕົ້ນທຶນ ການຜະລິດ ຫຼື ການປະກອບ;

3. ການສະໜອງບໍລິການພາຍໃນ ແມ່ນ ມູນຄ່າຊົມໃຊ້ການບໍລິການ ບໍ່ລວມອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້;

4. ການສະໜອງສິນຄ້າ ແລະ/ຫຼື ບໍລິການ ຈາກຜູ້ບໍ່ມີພູມລຳເນົາ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດຢູ່ ສປປ ລາວ ແມ່ນ ມູນຄ່າ ຊື້ສິນຄ້າ ແລະ/ຫຼື ການບໍລິການ ຕົວຈິງ.

## ມາດຕາ 15 ອັດຕາອາກອນຊົມໃຊ້

ອັດຕາອາກອນຊົມໃຊ້ ໄດ້ກຳນົດຕາມປະເພດສິນຄ້າ ແລະ ການບໍລິການ ມີ ດັ່ງນີ້:

1. ອັດຕາອາກອນຊົມໃຊ້ສິນຄ້າທົ່ວໄປ

<table>
<tr><th colspan="2">ລ/ດ</th><th>ປະເພດສິນຄ້າທົ່ວໄປ ທີ່ຖືກເສຍອາກອນຊົມໃຊ້</th><th colspan="3">ອັດຕາທຽບຖານ ເປັນສ່ວນຮ້ອຍ (%)</th></tr>
<tr><td>1</td><td colspan="5">ນ້ຳມັນເຊື້ອໄຟ</td></tr>
<tr><td rowspan="5"></td><td>1)</td><td>ນ້ຳມັນແອັດຊັງພິເສດ</td><td colspan="3">35%</td></tr>
<tr><td>2)</td><td>ນ້ຳມັນແອັດຊັງທຳມະດາ</td><td colspan="3">30%</td></tr>
<tr><td>3)</td><td>ນ້ຳມັນກາຊວນ</td><td colspan="3">20%</td></tr>
<tr><td>4)</td><td>ນ້ຳມັນກາດຍົນ</td><td colspan="3">8%</td></tr>
<tr><td>5)</td><td>ນ້ຳມັນເຕົາ, ນ້ຳມັນເຄື່ອງ, ນ້ຳມັນໄຮໂດລິກ,<br>ນ້ຳມັນໜຽວ, ນ້ຳມັນຫ້າມລໍ້</td><td colspan="3">5%</td></tr>
<tr><td>2</td><td colspan="5">ພາຫະນະ</td></tr>
<tr><td rowspan="17"></td><td>1</td><td colspan="4">ລົດຈັກ</td></tr>
<tr><td>1.1</td><td colspan="4">ລົດຈັກ ທີ່ນຳໃຊ້ພະລັງງານເຊື້ອໄຟ</td></tr>
<tr><td rowspan="8"></td><td>ລາຍການ</td><td>ຊີບີຢູ</td><td>ຊີເຄວີ</td><td>ໄອເຄວີ</td></tr>
<tr><td>ແຕ່ 110 ເຊເຊ ລົງມາ</td><td>10%</td><td>6%</td><td>3%</td></tr>
<tr><td>ເກີນ 110 ຫາ 150 ເຊເຊ</td><td>20%</td><td colspan="2" rowspan="6">ສຳລັບຄວາມແຮງ ເກີນ 110 ເຊເຊ ຂຶ້ນໄປໃຫ້ເກັບຕາມ ອັດຕາ ຊີບີຢູ</td></tr>
<tr><td>ເກີນ 150 ຫາ 200 ເຊເຊ</td><td>25%</td></tr>
<tr><td>ເກີນ 200 ຫາ 250 ເຊເຊ</td><td>35%</td></tr>
<tr><td>ເກີນ 250 ຫາ 500 ເຊເຊ</td><td>70%</td></tr>
<tr><td>ເກີນ 500 ຫາ 800 ເຊເຊ</td><td>90%</td></tr>
<tr><td>ເກີນ 800 ເຊເຊ</td><td>100%</td></tr>
<tr><td>2</td><td colspan="4">ລົດໃຫຍ່</td></tr>
<tr><td>2.1</td><td colspan="4">ລົດຂົນສົ່ງຂະໜາດນ້ອຍ</td></tr>
<tr><td>2.1.1</td><td colspan="4">ລົດຂົນສົ່ງໂດຍສານ ປະເພດ ລົດເກັງ, ລົດຈິບ, ລົດຕູ້, ລົດກະບະສີ່ປະຕູຂຶ້ນໄປ</td></tr>
<tr><td>2.1.1.1</td><td colspan="4">ທີ່ນຳໃຊ້ພະລັງງານເຊື້ອໄຟ</td></tr>
<tr><td rowspan="3"></td><td>ແຕ່ 1.000 ເຊເຊ ລົງມາ</td><td colspan="3">25%</td></tr>
<tr><td>ເກີນ 1.000 ຫາ 1.600 ເຊເຊ</td><td colspan="3">30%</td></tr>
<tr><td>ເກີນ 1.600 ຫາ 2.000 ເຊເຊ</td><td colspan="3">35%</td></tr>
</table>

| | | | |
|---|---|---|---|
| | | ເກີນ 2.000 ຫາ 2.500 ເຊເຊ | 40% |
| | | ເກີນ 2.500 ຫາ 3.000 ເຊເຊ | 45% |
| | | ເກີນ 3.000 ຫາ 4.000 ເຊເຊ | 70% |
| | | ເກີນ 4.000 ຫາ 5.000 ເຊເຊ | 85% |
| | | ເກີນ 5.000 ເຊເຊ | 90% |
| | 2.1.1.2 | ລົດຂົນສົ່ງໂດຍສານ ທີ່ນຳໃຊ້ພະລັງງານສອງລະບົບ ຄື ພະລັງງານເຊື້ອໄຟ ແລະ ພະລັງງານທົດແທນອື່ນ | 50% ຂອງອັດຕາ ຕາມຄວາມແຮງທີ່ໄດ້ກຳນົດໄວ້ ໃນຂໍ້ 2.1.1.1 |
| | 2.1.1.3 | ລົດຂົນສົ່ງໂດຍສານທີ່ນຳໃຊ້ພະລັງງານສະອາດ | 3% |
| | 2.1.2 | ລົດຂົນສົ່ງສິນຄ້າ ປະເພດ ລົດກະບະ 2 ປະຕູ ແລະ ລົດກະບະ 2 ປະຕູເຄິ່ງ | |
| | | ທີ່ນຳໃຊ້ພະລັງງານເຊື້ອໄຟ | 15% |
| | | ທີ່ນຳໃຊ້ພະລັງງານສະອາດ | 3% |
| | 2.1.3 | ລົດຂົນສົ່ງໂດຍສານ ແລະ ລົດຂົນສົ່ງສິນຄ້າ ຂະໜາດນ້ອຍອື່ນ | |
| | | ທີ່ນຳໃຊ້ພະລັງງານເຊື້ອໄຟ | 10% |
| | | ທີ່ນຳໃຊ້ພະລັງງານສະອາດ | 3% |
| | 2.2 | ລົດຂົນສົ່ງໂດຍສານ ແລະ ລົດຂົນສົ່ງສິນຄ້າ ຂະໜາດກາງ | |
| | | ທີ່ນຳໃຊ້ພະລັງງານເຊື້ອໄຟ | 8% |
| | | ທີ່ນຳໃຊ້ພະລັງງານສະອາດ | 3% |
| | 2.3 | ລົດຂົນສົ່ງໂດຍສານ ແລະ ລົດຂົນສົ່ງສິນຄ້າ ຂະໜາດໃຫຍ່ | |
| | | ທີ່ນຳໃຊ້ພະລັງງານເຊື້ອໄຟ | 5% |
| | | ທີ່ນຳໃຊ້ພະລັງງານສະອາດ | 3% |
| | 2.4 | ລົດຕູ້ແຊ່ເຢັນ, ລົດບັນທຸກ ຂອງແຫຼວ ຫຼື ອາຍແກັດ ຫຼື ຊີມັງຜົງ, ລົດບັນທຸກນ້ຳມັນ, ລົດນ້ຳ, ລົດເຄຣນ, ລົດຟອກລິບ, ລົດໂມ້ຊີມັງ , ລົດດູດອຶດ, ລົດສີດຊີມັງ, ລົດສີດພົ່ນທຸກຊະນິດ ແລະ ລົດເຮືອນເຄື່ອນທີ່ | 10% |
| | 2.5 | ລົດຫົວລາກ, ຫາງລາກ ແລະ ເຄິ່ງຫາງລາກ | 5% |
| | 2.6 | ລົດກ໊ອຟ ແລະ ລົດຮັບໃຊ້ສະໜາມກ໊ອຟ | 10% |
| | 2.7 | ລົດທ່ຽວຊົມສະເພາະໃນແຫຼ່ງທ່ອງທ່ຽວ | 5% |
| | 2.8 | ລົດຈັກສີ່ລໍ້ (ATV), ລົດໂກຄາດ (Gokart) | 25% |
| 3 | ຊິ້ນສ່ວນປະກອບ ນຳເຂົ້າມາເພື່ອປະກອບ ທີ່ບໍ່ຢູ່ໃນລະບົບໂຮງງານພາຍໃນປະເທດ ແລະ ເຄື່ອງອາໄຫຼ່ປ່ຽນຖ່າຍ | | |
| | ລົດຈັກ | | 5% |
| | ລົດຂົນສົ່ງໂດຍສານ ແລະ ລົດຂົນສົ່ງສິນຄ້າ ທຸກຂະໜາດ | | 10% |
| 4 | ເຄື່ອງຕົບແຕ່ງພາຫະນະ | | |
| | ເຄື່ອງສຽງ | | 20% |
| | ເຄື່ອງປະດັບເອ້ພາຫະນະ | | 15% |
| 5 | ເຫຼົ້າ ຫຼື ເຄື່ອງດື່ມ ທີ່ມີທາດເຫຼົ້າ | | |
| | ເຫຼົ້າ ຫຼື ເຄື່ອງດື່ມ ທີ່ມີທາດເຫຼົ້າ ເກີນ 23 ສ່ວນຮ້ອຍ | | 70% |

| | | |
|---|---|---|
| | ເຫຼົ້າ ຫຼື ເຄື່ອງດື່ມ ທີ່ມີທາດເຫຼົ້າ ແຕ່ 23 ສ່ວນຮ້ອຍ ລົງມາ | 60% |
| 6 | ເບຍ | 50% |
| 7 | ປະເພດຢາສູບ | |
| | ຢາຊີກາ, ຢາສູບເປັນກອກ ຫຼື ເປັນຊອງ ແລະ ຢາສູບປະເພດອື່ນ | 50% |
| | ຢາສູບໄຟຟ້າ, ນໍ້າຢາທີ່ມີສ່ວນປະສົມຂອງນີໂກຕິນ ສໍາລັບໃຊ້ກັບຢາສູບໄຟຟ້າ | 60% |
| | ຢາເສັ້ນ | 35% |
| 8 | ອາຍແກັດສ໌ໃຊ້ສໍາລັບຍານພາຫະນະ | 10% |
| 9 | ເຄື່ອງດື່ມສໍາເລັດຮູບ | |
| | ນໍ້າອັດລົມ, ໂຊດາ, ເຄື່ອງດື່ມປະເພດກາເຟ ແລະ ເຄື່ອງດື່ມອື່ນທີ່ຄ້າຍຄຽງ | 5% |
| | ເຄື່ອງດື່ມຊູກໍາລັງ | 10% |
| 10 | ເຄື່ອງແກ້ວຄຣິດສະຕັນທີ່ເປັນເຄື່ອງໃຊ້ ແລະ ປະດັບ, ໂຄມໄຟປະດັບ | 20% |
| 11 | ຜ້າພົມທີ່ເຮັດດ້ວຍຂົນແກະ ຫຼື ຂົນລະອຽດຂອງສັດ | 15% |
| 12 | ນໍ້າຫອມ, ຜະລິດຕະພັນເຄື່ອງສໍາອາງ, ອຸປະກອນຮັບໃຊ້ການເສີມສວຍ ແລະ ເສີມຄວາມງາມ | 20% |
| 13 | ໄພ້ ແລະ ເຄື່ອງຫຼິ້ນການພະນັນທຸກຊະນິດ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ | 90% |
| 14 | ບັ້ງໄຟ, ດອກໄມ້ໄຟ, ໝາກກະໂພກ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ | 80% |
| 15 | ເຮືອໄວ, ເຮືອຢອດ ແລະ ເຮືອກິລາທີ່ແລ່ນດ້ວຍເຄື່ອງຈັກ | 20% |
| 16 | ອຸປະກອນຮັບສັນຍານໂທລະພາບຜ່ານດາວທຽມ | 15% |
| 17 | ເຄື່ອງຫຼິ້ນສຽງ ແລະ ພາບ, ກ້ອງຖ່າຍຮູບ, ໂທລະສັບ, ເຄື່ອງອັດສຽງ ແລະ ພາບ, ເຄື່ອງດົນຕີ | 10% |
| 18 | ເຮືອບິນບໍ່ມີຄົນຂັບ, ເຄື່ອງຖ່າຍພາບທາງອາກາດ, ເຄື່ອງບິນດ້ວຍຈ້ອງ ແລະ ເຄື່ອງຈັກໄອພົ່ນຂະໜາດນ້ອຍ | 20% |
| 19 | ໂຕະບິນລຽດ, ໂຕະສະນຸກເກີ, ອຸປະກອນໂບລິ້ງ, ໂຕະຫຼິ້ນບານເຕະ | 30% |
| 20 | ຕູ້ເກມຢອດຫຼຽນ ແລະ ເຄື່ອງຫຼິ້ນເກມທຸກປະເພດ | 35% |

2. ອັດຕາອາກອນຊົມໃຊ້ສໍາລັບການບໍລິການ

| ລ/ດ | ການບໍລິການທີ່ຕ້ອງເສຍອາກອນຊົມໃຊ້ | ອັດຕາ |
|---|---|---|
| 1 | ການບັນເທີງ: ໂຮງເຕັ້ນລໍາ, ດິດສະໂກເທັກ, ຄາຣາໂອເກະ | 35% |
| 2 | ກິດຈະການໂບລິ້ງ | 20% |
| 3 | ກິດຈະການສັນທະກໍາເສີມຄວາມງາມ | 10% |
| 4 | ກິດຈະການການບໍລິການໂທລະສັບ, ສັນຍານໂທລະພາບສາຍໄຍແກ້ວ, ສັນຍານໂທລະພາບ ດີຈີຕອນ | 5% |
| 5 | ກິດຈະການການບໍລິການອິນເຕີເນັດ | 3% |
| 6 | ກິດຈະການສະໜາມກ໊ອຟ | 20% |
| 7 | ກິດຈະການຫວຍ | 25% |

| | | |
|---|---|---|
| 8 | ກິດຈະການກາຊີໂນ ແລະ ຕູ້ເກມຍອດຫຼຽນ ແລະ ຫຼິ້ນເກມທຸກປະເພດ | 50% |
| 9 | ກິດຈະການ ແຂ່ງລົດ, ແຂ່ງມ້າ, ຕີໄກ່ | 25% |
| 10 | ກິດຈະການ ບາລຸນ, ບໍລິການບິນດ້ອຍຈ້ອງ ຫຼື ຈັກອາຍພົ່ນຂະໜາດນ້ອຍ, ບໍລິການຖ່າຍພາບທາງອາກາດ. | 10% |

ສຳລັບລົດໃຫຍ່ ທີ່ນຳໃຊ້ພະລັງງານເຊື້ອໄຟ ທີ່ຜະລິດ ຫຼື ປະກອບ ຢູ່ໃນລະບົບໂຮງງານພາຍໃນປະເທດ ໃນຮູບແບບ ຊີເຄດີ ໃຫ້ເກັບໃນອັດຕາ 5% ແລະ ໂອເຄດີ ໃຫ້ເກັບໃນອັດຕາ 3%.

**ມາດຕາ 16 ອາກອນຊົມໃຊ້ຕ່ຳສຸດ**

ອາກອນຊົມໃຊ້ຕ່ຳສຸດ ແມ່ນ ອາກອນເດັດຖານ ນຳໃຊ້ສະເພາະສິນຄ້ານຳເຂົ້າບາງປະເພດທີ່ຖືກເສຍອາກອນຊົມໃຊ້ ຕາມນະໂຍບາຍຂອງລັດຖະບານ.

ສິນຄ້າ ທີ່ຖືກເສຍອາກອນຊົມໃຊ້ຕ່ຳສຸດ ແມ່ນ ສິນຄ້າທີ່ໄດ້ຄິດໄລ່ເສຍອາກອນຊົມໃຊ້ຕາມອັດຕາທຽບຖານ ທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງກົດໝາຍສະບັບນີ້ແລ້ວ ຫາກມີມູນຄ່າຕ່ຳກວ່າ ຈຳນວນອາກອນຊົມໃຊ້ຕ່ຳສຸດ ແມ່ນໃຫ້ເກັບຕາມອາກອນຊົມໃຊ້ຕ່ຳສຸດ.

ລັດຖະບານ ເປັນຜູ້ກຳນົດປະເພດສິນຄ້າ ແລະ ອາກອນຊົມໃຊ້ຕ່ຳສຸດ ຕາມນະໂຍບາຍດັດສົມການຊົມໃຊ້ ແລະ ເສດຖະກິດ ໃນແຕ່ລະໄລຍະ ເພື່ອນຳສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາ.

**ມາດຕາ 17 ກຳນົດເວລາຄິດໄລ່ເກັບອາກອນຊົມໃຊ້**

ກຳນົດເວລາຄິດໄລ່ເກັບອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້:

- ການນຳເຂົ້າສິນຄ້າ ໃຫ້ຄິດໄລ່ເກັບອາກອນຊົມໃຊ້ໃນເວລາແຈ້ງເສຍພາສີຂາເຂົ້າ;
- ການສະໜອງ ສິນຄ້າ ແລະ/ຫຼື ບໍລິການ ຢູ່ພາຍໃນປະເທດ ໃຫ້ຄິດໄລ່ເກັບອາກອນຊົມໃຊ້ໃນເວລາມີການສະໜອງຕົວຈິງ.
- ການສະໜອງ ສິນຄ້າ ແລະ/ຫຼື ບໍລິການ ຈາກຜູ້ບໍ່ມີພູມລຳເນົາ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດຢູ່ ສປປ ລາວ ໃຫ້ຄິດໄລ່ເກັບອາກອນຊົມໃຊ້ໃນເວລາມີການຊື້ ແລະ/ຫຼື ການບໍລິການຕົວຈິງ.

**ມາດຕາ 18 ການແຈ້ງເສຍ ແລະ ການມອບອາກອນຊົມໃຊ້**

ຜູ້ນຳເຂົ້າສິນຄ້າ, ຜູ້ຜະລິດສິນຄ້າ ແລະ ຜູ້ສະໜອງການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້ ທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້ ມີໜ້າທີ່ແຈ້ງເສຍອາກອນຊົມໃຊ້ ດັ່ງນີ້:

- ຜູ້ນຳເຂົ້າສິນຄ້າ ຕ້ອງແຈ້ງເສຍ ແລະ ມອບ ອາກອນຊົມໃຊ້ ໃນເວລາແຈ້ງເສຍພາສີຂາເຂົ້າຢູ່ດ່ານພາສີ;
- ຜູ້ຜະລິດສິນຄ້າ ແລະ ຜູ້ສະໜອງການບໍລິການ ຢູ່ພາຍໃນປະເທດ ຕ້ອງແຈ້ງເສຍ ແລະ ມອບອາກອນຊົມໃຊ້ທຸກເດືອນ ບໍ່ໃຫ້ກາຍ ວັນທີ 20 ຂອງເດືອນຖັດໄປ ຕໍ່ຂະແໜງສ່ວຍສາອາກອນບ່ອນຕົນຂຶ້ນກັບ;
- ຜູ້ຊື້ສິນຄ້າ ແລະ/ຫຼື ບໍລິການ ທີ່ເປັນຜູ້ດຳເນີນທຸລະກິດຢູ່ພາຍໃນປະເທດ ຈາກຜູ້ບໍ່ມີພູມລຳເນົາ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ໃຫ້ແຈ້ງເສຍ ແລະ ມອບ ອາກອນຊົມໃຊ້ ບໍ່ໃຫ້ກາຍ ວັນທີ 20 ຂອງເດືອນຖັດໄປ. ສຳລັບຜູ້ຊື້ທີ່ເປັນບຸກຄົນທົ່ວໄປໃຫ້ແຈ້ງເສຍອາກອນຊົມໃຊ້ບໍ່ໃຫ້ກາຍ ສິບຫ້າວັນ ນັບແຕ່ວັນໄດ້ຄິດໄລ່ເກັບອາກອນເປັນຕົ້ນໄປ.

ການມອບອາກອນຊົມໃຊ້ ໃຫ້ມອບຜ່ານ ທະນາຄານທຸລະກິດ ທີ່ມີບັນຊີຂອງ ຄັງເງິນແຫ່ງຊາດ ຫຼື ຄັງເງິນແຫ່ງຊາດ ແລະ ຄັງເງິນແຫ່ງຊາດປະຈຳ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ.

## ພາກທີ III

## ສິດ ແລະ ພັນທະ ຂອງ ຜູ້ມອບອາກອນ, ບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ

**ມາດຕາ 19 ສິດຂອງຜູ້ມອບອາກອນຊຶມໃຊ້**

ຜູ້ມອບອາກອນຊຶມໃຊ້ ມີ ສິດ ດັ່ງນີ້:

1. ໄດ້ຮັບຂໍ້ມູນ ຂ່າວສານ, ຊີ້ແຈງ, ອະທິບາຍ ແລະ ມີຄໍາເຫັນ ກ່ຽວກັບວຽກງານອາກອນຊຶມໃຊ້;
2. ໄດ້ຮັບການຮັກສາຄວາມລັບ ກ່ຽວກັບຂໍ້ມູນອາກອນຊຶມໃຊ້ຂອງຕົນ;
3. ໄດ້ຮັບນະໂຍບາຍ ຍົກເວັ້ນ ຫຼື ຫຼຸດຜ່ອນ ອັດຕາ ຫຼື ປະເພດ ອາກອນຊຶມໃຊ້ ຕາມກົດໝາຍ;
4. ຮັບຮູ້ເນື້ອໃນບົດບັນທຶກ, ອະທິບາຍ, ຊີ້ແຈງ ແລະ ສະເໜີ ຕໍ່ຜົນຂອງການກວດກາ;
5. ໄດ້ຮັບເງິນອາກອນຊຶມໃຊ້ທີ່ໄດ້ມອບເກີນ ຕາມກົດໝາຍ;
6. ຮ້ອງຟ້ອງ, ສະເໜີ ຫຼື ຮ້ອງຂໍຄວາມເປັນທໍາ ຕໍ່ການກະທໍາ ຂອງພະນັກງານ, ເຈົ້າໜ້າທີ່ສ່ວຍສາອາກອນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
7. ປະຕິເສດ ການສະໜອງຂໍ້ມູນ ທີ່ບໍ່ກ່ຽວຂ້ອງກັບວຽກງານອາກອນຊຶມໃຊ້;
8. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 20 ພັນທະຂອງຜູ້ມອບອາກອນຊຶມໃຊ້**

ຜູ້ມອບອາກອນຊຶມໃຊ້ ມີ ພັນທະ ດັ່ງນີ້:

1. ຄິດໄລ່ເກັບ, ຫັກ, ແຈ້ງເສຍ ແລະ ມອບ ອາກອນຊຶມໃຊ້ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;
2. ຮັບຜິດຊອບຕໍ່ ການຄິດໄລ່ເກັບ, ຫັກ, ແຈ້ງເສຍ, ຂໍຍົກເວັ້ນ ຫຼື ຫຼຸດຜ່ອນ ອັດຕາ ຫຼື ປະເພດ ອາກອນຊຶມໃຊ້ ທີ່ບໍ່ຖືກຕ້ອງ;
3. ສະຫຼຸບການມອບພັນທະໃນປີ ແລະ ສ້າງແຜນມອບອາກອນຊຶມໃຊ້ໃນປີຖັດໄປ;
4. ລາຍງານບັນຊີເງິນຝາກຂອງຕົນຢູ່ຄັງເງິນແຫ່ງຊາດ, ທະນາຄານ ຫຼື ສະຖາບັນການເງິນອື່ນ ໃຫ້ແກ່ຂະແໜງສ່ວຍສາອາກອນ;
5. ສະໜອງເອກະສານບັນຊີ, ໃບເກັບເງິນ, ໃບຢັ້ງຢືນຖານະການເງິນ ແລະ ເອກະສານອື່ນ ທີ່ພົວພັນກັບວຽກງານອາກອນຊຶມໃຊ້ ຕາມກົດໝາຍ;
6. ລາຍງານອາກອນຊຶມໃຊ້ທີ່ໄດ້ຮັບການ ຍົກເວັ້ນ ຫຼື ຫຼຸດຜ່ອນ ໃຫ້ແກ່ຂະແໜງສ່ວຍສາອາກອນ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 21 ສິດ ແລະ ພັນທະຂອງບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ**

ບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ ມີ ສິດ ແລະ ພັນທະ ດັ່ງນີ້:

1. ສະໜອງຂໍ້ມູນ ຂອງຜູ້ເສຍອາກອນ, ຜູ້ມອບອາກອນ ແລະ ໃຫ້ການຮ່ວມມື ກ່ຽວກັບວຽກງານອາກອນຊຶມໃຊ້ ຕໍ່ຂະແໜງສ່ວຍສາອາກອນ ຕາມພາລະບົດບາດຂອງຕົນ;
2. ແຈ້ງ ແລະ ລາຍງານການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອາກອນຊຶມໃຊ້ ຕໍ່ຂະແໜງສ່ວຍສາອາກອນ ໂດຍໄດ້ຮັບການປົກປ້ອງ ແລະ ຮັກສາຄວາມລັບຕາມກົດໝາຍ;
3. ນໍາໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ພາກທີ IV
## ສິດ ແລະ ໜ້າທີ່ ຂອງພະນັກງານ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ

**ມາດຕາ 22 ສິດຂອງ ພະນັກງານ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ**

ພະນັກງານ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ ມີ ສິດ ດັ່ງນີ້:

1. ໄດ້ຮັບການຮ່ວມມື ແລະ ອຳນວຍຄວາມສະດວກ ກ່ຽວກັບວຽກງານອາກອນຊົມໃຊ້ ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ເມື່ອມີຄວາມຈຳເປັນ ຫຼື ມີການຮ້ອງຂໍຈາກຂະແໜງສ່ວຍສາອາກອນ;
2. ພົບພັນກັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອເກັບກຳຂໍ້ມູນ ກ່ຽວກັບວຽກງານອາກອນຊົມໃຊ້;
3. ທວງໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອສະໜອງເອກະສານ, ຂໍ້ມູນ ກ່ຽວກັບວຽກງານອາກອນຊົມໃຊ້;
4. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 23 ໜ້າທີ່ຂອງ ພະນັກງານ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ**

ພະນັກງານ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ ມີ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບອາກອນຊົມໃຊ້ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
2. ປະຕິບັດຕາມ ກົດໝາຍ, ລະບຽບການ ກ່ຽວກັບວຽກງານອາກອນຊົມໃຊ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
3. ສະໜອງຂໍ້ມູນ ຂ່າວສານ, ແນະນຳ, ອະທິບາຍ ກ່ຽວກັບວຽກງານອາກອນຊົມໃຊ້;
4. ກວດກາ ການຄິດໄລ່, ການຫັກ, ການແຈ້ງ, ການຂໍຄືນ, ການສົ່ງຄືນເງິນອາກອນທີ່ຜູ້ມອບເກີນ, ການຍົກເວັ້ນ, ການຫຼຸດຜ່ອນ ແລະ ການມອບອາກອນ;
5. ທວງໜີ້ອາກອນຊົມໃຊ້ຄ້າງມອບ ຕາມກົດໝາຍ ແລະ ລະບຽບການ;
6. ຮັກສາຂໍ້ມູນຄວາມລັບ ຂອງຜູ້ເສຍອາກອນຊົມໃຊ້;
7. ຊຸກຍູ້, ຕິດຕາມ ການແຈ້ງເສຍອາກອນ ແລະ ການຊຳລະອາກອນຊົມໃຊ້ຜ່ານທະນາຄານ ເພື່ອມອບເຂົ້າງົບປະມານແຫ່ງລັດ;
8. ປະສານສົມທົບກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານອາກອນຊົມໃຊ້;
9. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີຂອງຜູ້ເສຍອາກອນ ຕາມຂອບເຂດສິດຂອງຕົນ;
10. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 24 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ປະຕິເສດການສະໜອງຂໍ້ມູນ ຂ່າວສານ ດ້ານອາກອນຊົມໃຊ້;

2. ຮ່ວມມືກະທຳຜິດ, ປົກປິດ ແລະ ຊຸກເຊື່ອງ ຫຼື ປົກປ້ອງ ຜູ້ກະທຳຜິດ, ກິດໜ່ວງ ຖ່ວງດຶງ ຫຼື ຂັດຂວາງການຈັດຕັ້ງປະຕິບັດວຽກງານອາກອນຊົມໃຊ້;

3. ໝິ່ນປະໝາດ, ບັງຄັບ ນາບຂູ່, ທຳຮ້າຍຮ່າງກາຍ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ ຫຼື ຜູ້ເສຍອາກອນຊົມໃຊ້;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 25 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ ມີ ພຶດຕິກຳ ດັ່ງນີ້:

1. ເປີດເຜີຍຄວາມລັບຂອງລັດ, ທາງລັດຖະການ ແລະ ຂໍ້ມູນສ່ວນຕົວຂອງຜູ້ເສຍອາກອນຊົມໃຊ້, ກິດໜ່ວງ ຖ່ວງດຶງ, ປອມແປງເອກະສານ, ເມີນເສີຍໃນການປະຕິບັດໜ້າທີ່, ປະລະໜ້າທີ່ ແລະ ຂາດຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບມອບໝາຍ;

2. ສວຍໃຊ້ໜ້າທີ່ຕຳແໜ່ງ, ຂໍເອົາ, ທວງເອົາ ຫຼື ຮັບເອົາສິນບົນ, ບັງຄັບ ນາບຂູ່ ຜູ້ເສຍອາກອນຊົມໃຊ້ ຊຶ່ງພາໃຫ້ເສຍຜົນປະໂຫຍດຂອງລັດ;

3. ເກັບອາກອນຊົມໃຊ້ ໂດຍບໍ່ຖືກຕ້ອງ;

4. ນຳເອົາເງິນອາກອນຊົມໃຊ້ ທີ່ເກັບໄດ້ໄປນຳໃຊ້ ໂດຍບໍ່ມອບເຂົ້າງົບປະມານແຫ່ງລັດ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 26 ຂໍ້ຫ້າມສຳລັບ ຜູ້ເສຍ ແລະ ຜູ້ມອບ ອາກອນ**

ຫ້າມ ຜູ້ເສຍ ແລະ ຜູ້ມອບ ອາກອນ ມີ ພຶດຕິກຳ ດັ່ງນີ້:

1. ທຳລາຍຂໍ້ມູນຫຼັກຖານ, ປອມແປງເອກະສານ, ເຊື່ອງອຳ ປົດບັງລາຍຮັບ ຫຼື ລະເມີດກົດໝາຍ ທີ່ຕິດພັນກັບການເສຍ ຫຼື ການມອບ ອາກອນຊົມໃຊ້ຂອງຕົນ;

2. ໃຫ້ສິນບົນ ຫຼື ຄ່າຈ້າງລາງວັນ, ສົມຮູ້ຮ່ວມຄິດ ກັບພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ສ່ວຍສາອາກອນເອົາເງິນຂອງລັດ;

3. ປອມແປງ ໃບເກັບເງິນ, ໃບຮັບເງິນ ຫຼື ເອກະສານອື່ນ ກ່ຽວກັບອາກອນຊົມໃຊ້;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ VI
# ການຄຸ້ມຄອງ ແລະ ກວດກາ ວຽກງານອາກອນຊົມໃຊ້
## ໝວດທີ 1
## ການຄຸ້ມຄອງວຽກງານອາກອນຊົມໃຊ້

**ມາດຕາ 27 ອົງການຄຸ້ມຄອງວຽກງານອາກອນຊົມໃຊ້**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານອາກອນຊົມໃຊ້ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການເງິນເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານອາກອນຊົມໃຊ້ ປະກອບດ້ວຍ:

1. ກະຊວງການເງິນ;
2. ກົມສ່ວຍສາອາກອນ;
3. ສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງ;
4. ສ່ວຍສາອາກອນປະຈຳເມືອງ, ເທດສະບານ, ນະຄອນ.

**ມາດຕາ 28 ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານອາກອນຊົມໃຊ້ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ, ປັບປຸງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານອາກອນຊົມໃຊ້ ເພື່ອສະເໜີ ລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານອາກອນຊົມໃຊ້ ເປັນແຜນການ, ແຜນງານ ແລະ/ຫຼື ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານອາກອນຊົມໃຊ້;
4. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານວິຊາສະເພາະ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານອາກອນຊົມໃຊ້;
5. ຕິດຕາມ ແລະ ກວດກາການຄິດໄລ່, ການໄລ່ລຽງອາກອນຂອງເຈົ້າໜ້າທີ່ສ່ວຍສາອາກອນ ແລະ ຜູ້ເສຍອາກອນ ໃຫ້ຖືກຕ້ອງຕາມກົດໝາຍ;
7. ແກ້ໄຂຄຳສະເໜີ ກ່ຽວກັບວຽກງານອາກອນຊົມໃຊ້;
8. ປະສານສົມທົບກັບ ກະຊວງ, ອົງການ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງກັບວຽກງານອາກອນຊົມໃຊ້;
9. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານອາກອນຊົມໃຊ້;
10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານອາກອນຊົມໃຊ້ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງກົມສ່ວຍສາອາກອນ**

ໃນການຄຸ້ມຄອງວຽກງານອາກອນຊົມໃຊ້ ກົມສ່ວຍສາອາກອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ຫຼື ໂຄງການ ກ່ຽວກັບວຽກງານອາກອນຊົມໃຊ້;

2. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານອາກອນຊົມໃຊ້;

3. ຕິດຕາມ ແລະ ກວດກາ ວຽກງານອາກອນຊົມໃຊ້;

4. ອອກ ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ, ໃບສັ່ງມອບ, ໃບເລັ່ງທວງ, ໃບຄິດໄລ່ ທີ່ຕິດພັນກັບວຽກງານອາກອນຊົມໃຊ້ ລວມທັງລົບລ້າງເອກະສານດັ່ງກ່າວທີ່ບໍ່ຖືກຕ້ອງ;

5. ນຳໃຊ້ລະບົບ ຂໍ້ມູນ ຂ່າວສານ ເຕັກໂນໂລຊີ ເຂົ້າໃນວຽກງານອາກອນຊົມໃຊ້;

6. ແກ້ໄຂຄຳສະເໜີ ກ່ຽວກັບວຽກງານອາກອນຊົມໃຊ້;

7. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານອາກອນຊົມໃຊ້;

8. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານອາກອນຊົມໃຊ້ ຕາມການມອບໝາຍ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານອາກອນຊົມໃຊ້ ໃຫ້ກະຊວງການເງິນ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 30 ສິດ ແລະ ໜ້າທີ່ ຂອງສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານອາກອນຊົມໃຊ້ ສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນການພັດທະນາ ແລະ ກົນໄກການຄຸ້ມຄອງວຽກງານອາກອນຊົມໃຊ້;

2. ໂຄສະນາ ເຜີຍແຜ່ ກົດໝາຍ, ຄຳສັ່ງ ແລະ ນິຕິກຳອື່ນ ກ່ຽວກັບວຽກງານອາກອນຊົມໃຊ້ ເພື່ອຍົກສູງຄວາມຮູ້, ສະຕິ ໃນການປະຕິບັດນິຕິກຳດັ່ງກ່າວ ໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

3. ຊີ້ນຳ, ຕິດຕາມ ການຈັດຕັ້ງປະຕິບັດກົດໝາຍ ທີ່ກ່ຽວຂ້ອງຢ່າງເປັນປົກກະຕິ ເພື່ອຄຸ້ມຄອງລາຍຮັບອາກອນຊົມໃຊ້ ໃຫ້ຖືກຕ້ອງ ຄົບຖ້ວນ ແລະ ທັນເວລາ;

4. ອອກ ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ, ໃບສັ່ງມອບ, ໃບເລັ່ງທວງ, ໃບຄິດໄລ່ ທີ່ຕິດພັນກັບວຽກງານອາກອນຊົມໃຊ້ ລວມທັງລົບລ້າງເອກະສານດັ່ງກ່າວທີ່ບໍ່ຖືກຕ້ອງ;

5. ຈັດຕັ້ງປະຕິບັດ ລະບອບບັນຊີແຫ່ງລັດ ໃນການບັນທຶກ ທຸກຮ່ວງລາຍຮັບອາກອນຊົມໃຊ້, ສົມທົບກັບຄັງເງິນແຫ່ງຊາດປະຈຳ ແຂວງ, ນະຄອນຫຼວງ ສ້າງບົດສະຫຼຸບ ແລະ ວິໄຈຕົວເລກລາຍຮັບ;

6. ຄຸ້ມຄອງ ຕິດຕາມການຄິດໄລ່, ການໄລ່ລຽງອາກອນຂອງ ເຈົ້າໜ້າທີ່ສ່ວຍສາອາກອນ ແລະ ຜູ້ເສຍອາກອນຊົມໃຊ້ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ;

7. ຄຸ້ມຄອງ, ນຳໃຊ້ເຕັກໂນໂລຊີ, ຂໍ້ມູນ ຂ່າວສານ ແລະ ທັນການເຄື່ອນໄຫວວຽກງານອາກອນຊົມໃຊ້ ໃຫ້ເປັນທັນສະໄໝ;

8. ຄຸ້ມຄອງ, ນຳໃຊ້ງົບປະມານ ແລະ ເງິນບຳເນັດ, ພາຫະນະ, ວັດຖຸປະກອນຮັບໃຊ້ວຽກງານອາກອນຊົມໃຊ້;

9. ປະສານສົມທົບກັບ ອົງການປົກຄອງຂອງແຂວງ, ນະຄອນຫຼວງ, ພະແນກການເງິນ ແລະ ພະແນກການອື່ນ ກ່ຽວກັບວຽກງານອາກອນຊົມໃຊ້;

10. ຕິດຕາມ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານອາກອນຊົມໃຊ້;

11. ພົວພັນ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານອາກອນຊົມໃຊ້ ຕາມການມອບໝາຍ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານອາກອນຊົມໃຊ້ ໃຫ້ກົມສ່ວຍສາອາກອນ ແລະ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງ ສ່ວຍສາອາກອນປະຈຳ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານອາກອນຊົມໃຊ້ ສ່ວຍສາອາກອນປະຈຳ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນພັດທະນາ ແລະ ກົນໄກການຄຸ້ມຄອງວຽກງານອາກອນຊົມໃຊ້ ໃຫ້ໄດ້ຮັບຜົນດີ;

2. ເຜີຍແຜ່ ກົດໝາຍ, ຄຳສັ່ງ ແລະ ນິຕິກຳອື່ນ ກ່ຽວກັບວຽກງານອາກອນຊົມໃຊ້ ເພື່ອປຸກສຳນຶກຄວາມຮັບຮູ້, ສະຕິ ໃນການປະຕິບັດນິຕິກຳດັ່ງກ່າວ ໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

3. ຕິດຕາມ ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳອື່ນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ ແລະ ເປັນເອກະພາບ ເພື່ອຄຸ້ມຄອງລາຍຮັບອາກອນຊົມໃຊ້ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;

4. ອອກ ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ, ໃບສັ່ງມອບ, ໃບເລັ່ງທວງ, ໃບຄິດໄລ່ ທີ່ຕິດພັນກັບວຽກງານອາກອນຊົມໃຊ້ ລວມທັງລົບລ້າງເອກະສານດັ່ງກ່າວທີ່ບໍ່ຖືກຕ້ອງ;

5. ຈັດຕັ້ງປະຕິບັດລະບົບບັນຊີແຫ່ງລັດ ໃນການບັນທຶກທຸກຊ່ອງລາຍຮັບອາກອນຊົມໃຊ້, ສົມທົບກັບຄັງເງິນແຫ່ງຊາດ ປະຈຳເມືອງ, ເທດສະບານ, ນະຄອນ ສະຫຼຸບ ແລະ ວິໄຈຕົວເລກລາຍຮັບ;

6. ຄຸ້ມຄອງ ຕິດຕາມການຄິດໄລ່, ການໄລ່ລຽງອາກອນ ຂອງເຈົ້າໜ້າທີ່ສ່ວຍສາອາກອນ ແລະ ຜູ້ເສຍອາກອນຊົມໃຊ້ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ;

7. ຄຸ້ມຄອງ, ນຳໃຊ້ເຕັກໂນໂລຊີ, ຂໍ້ມູນ ຂ່າວສານ ແລະ ທັນການເຄື່ອນໄຫວວຽກງານອາກອນຊົມໃຊ້ ໃຫ້ເປັນທັນສະໄໝ;

8. ຄຸ້ມຄອງ, ນຳໃຊ້ງົບປະມານ, ເງິນບຳເນັດ, ພາຫະນະ ແລະ ວັດຖຸປະກອນຮັບໃຊ້ວຽກງານອາກອນຊົມໃຊ້;

9. ປະສານສົມທົບກັບ ອົງການປົກຄອງເມືອງ, ເທດສະບານ, ນະຄອນ, ຫ້ອງການການເງິນ ແລະ ຫ້ອງການອື່ນ ກ່ຽວກັບວຽກງານອາກອນຊົມໃຊ້;

10. ຕິດຕາມ ການຈັດຕັ້ງປະຕິບັດວຽກງານອາກອນຊົມໃຊ້;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານອາກອນຊົມໃຊ້ ໃຫ້ສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງ ແລະ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ໝວດທີ 2
## ການກວດກາວຽກງານອາກອນຊົມໃຊ້

### ມາດຕາ 32 ອົງການກວດກາວຽກງານອາກອນຊົມໃຊ້

ອົງການກວດກາວຽກງານອາກອນຊົມໃຊ້ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານອາກອນຊົມໃຊ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

### ມາດຕາ 33 ເນື້ອໃນການກວດກາ

ການກວດກາວຽກງານອາກອນຊົມໃຊ້ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານອາກອນຊົມໃຊ້;
2. ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການຄຸ້ມຄອງວຽກງານອາກອນຊົມໃຊ້;
3. ການນຳໃຊ້ສິດ, ການປະຕິບັດໜ້າທີ່ ແລະ ການນຳໃຊ້ມາດຕະການຕໍ່ຜູ້ລະເມີດ.

### ມາດຕາ 34 ການກວດກາທາງດ້ານວິຊາການ

ການກວດກາທາງດ້ານວິຊາການ ກ່ຽວກັບອາກອນຊົມໃຊ້ ມີ ດັ່ງນີ້:

1. ແຜນການການມອບພັນທະອາກອນຊົມໃຊ້ ຂອງຜູ້ເສຍອາກອນ;
2. ການແຈ້ງເສຍອາກອນຊົມໃຊ້ ຂອງຜູ້ເສຍອາກອນ;
3. ການກວດກາຫຼັງການແຈ້ງເສຍອາກອນຊົມໃຊ້;
4. ການຂໍຫັກ ແລະ ສົ່ງຄືນ ອາກອນຊົມໃຊ້;
5. ສະຖານທີ່, ວັດຖຸປະກອນ ແລະ ເອກະສານ ກ່ຽວກັບການຄິດໄລ່ອາກອນຊົມໃຊ້;
6. ການໂອນລາຄາ;
7. ບົດສະຫຼຸບລາຍງານການເງິນ;
8. ກົນໄກຄຸ້ມຄອງຄວາມສ່ຽງຂອງຜູ້ເສຍອາກອນຊົມໃຊ້;
9. ເນື້ອໃນອື່ນທີ່ກ່ຽວຂ້ອງກັບວຽກງານອາກອນຊົມໃຊ້.

### ມາດຕາ 35 ຮູບການການກວດກາ

ການກວດກາວຽກງານອາກອນຊົມໃຊ້ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາປົກກະຕິ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດການແບບກະທັນຫັນ.

ການກວດກາປົກກະຕິ ແມ່ນ ການກວດກາທີ່ດຳເນີນຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງໄດ້ແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ແລະ ນອກແຜນການ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາຕໍ່ເປົ້າໝາຍໃດໜຶ່ງ ໃຫ້ດໍາເນີນຢູ່ ຫ້ອງການຂະແໜງສ່ວຍສາອາກອນ ຫຼື ສໍານັກງານ ຫຼື ສະຖານທີ່ດໍາເນີນທຸລະກິດ ຂອງຫົວໜ່ວຍວິສາຫະກິດ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 36 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການເປັນແບບຢ່າງໃນການມອບພັນທະອາກອນຊົມໃຊ້, ການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດວຽກງານອາກອນຊົມໃຊ້ ຈະໄດ້ຮັບການຍ້ອງຍໍ, ອໍານວຍຄວາມສະດວກ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 37 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບອາກອນຊົມໃຊ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

### ມາດຕາ 38 ມາດຕະການປັບໃໝ

ຜູ້ມອບອາກອນ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອາກອນຊົມໃຊ້ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ປັບໃໝ 100.000 ກີບ ຕໍ່ຄັ້ງ ສໍາລັບການບໍ່ປະກອບເລກປະຈໍາຕົວຜູ້ເສຍອາກອນໃສ່ໃນການແຈ້ງມອບອາກອນຊົມໃຊ້;
2. ປັບໃໝ 500.000 ກີບ ຕໍ່ຄັ້ງ ສໍາລັບການແຈ້ງເສຍອາກອນຊົມໃຊ້ຊັກຊ້າ ບໍ່ຖືກຕາມກໍານົດເວລາທີ່ກໍານົດໄວ້ໃນກົດໝາຍສະບັບນີ້;
3. ປັບໃໝ 1.000.000 ກີບ ຕໍ່ການເລັ່ງທວງໜຶ່ງຄັ້ງ ສໍາລັບການບໍ່ສະໜອງເອກະສານ, ຂໍ້ມູນ ກ່ຽວກັບວຽກງານອາກອນຊົມໃຊ້;
4. ປັບໃໝ 1.500.000 ກີບ ຕໍ່ຄັ້ງ ສໍາລັບການບໍ່ແຈ້ງເສຍອາກອນຊົມໃຊ້ ຕາມກໍານົດເວລາທີ່ກໍານົດໄວ້ໃນກົດໝາຍສະບັບນີ້;
5. ປັບໃໝ 3.000.000 ກີບ ຕໍ່ຄັ້ງ ສໍາລັບການບໍ່ແຈ້ງການປ່ຽນແປງຂໍ້ມູນ ເປັນຕົ້ນ ທີ່ຕັ້ງວິສາຫະກິດ, ເລກໂທລະສັບ ແລະ ຂໍ້ມູນອື່ນ ໃສ່ໃນການແຈ້ງມອບອາກອນຊົມໃຊ້;
6. ປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າອາກອນຊົມໃຊ້ທີ່ແຈ້ງເສຍ ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ບໍ່ຄົບຖ້ວນ;
7. ປັບໃໝ ສູນຈຸດໜຶ່ງສ່ວນຮ້ອຍ (0,1%) ຕໍ່ວັນ ຂອງຈໍານວນອາກອນຊົມໃຊ້ ທີ່ມອບຊັກຊ້າ ຕາມກໍານົດເວລາ ທີ່ກໍານົດໄວ້ໃນກົດໝາຍສະບັບນີ້;

8. ສໍາລັບຈໍານວນອາກອນຊຶມໃຊ້ ທີ່ຍັງຄ້າງມອບ ຈະຖືກປະຕິບັດມາດຕະການປັບໃໝ ດັ່ງນີ້:

- ປັບໃໝ ສາມສິບສ່ວນຮ້ອຍ (30%) ຂອງຈໍານວນອາກອນຊຶມໃຊ້ ທີ່ຕ້ອງມອບ ສໍາລັບການເລັ່ງທວງຄັ້ງທີ ໜຶ່ງ;
- ປັບໃໝ ຫົກສິບສ່ວນຮ້ອຍ (60%) ຂອງຈໍານວນອາກອນຊຶມໃຊ້ ທີ່ຕ້ອງມອບ ສໍາລັບການເລັ່ງທວງຄັ້ງທີ ສອງ;
- ປັບໃໝ ຮ້ອຍສ່ວນຮ້ອຍ (100%) ຂອງຈໍານວນອາກອນຊຶມໃຊ້ ທີ່ຕ້ອງມອບ ສໍາລັບການເລັ່ງທວງຄັ້ງທີ ສາມ.

ໃນກໍລະນີຜູ້ມີອາກອນຊຶມໃຊ້ຄ້າງມອບ ຫາກບໍ່ປະຕິບັດຕາມມາດຕະການດັ່ງກ່າວເທິງນີ້ ກໍຈະຖືກໂຈະການດໍາເນີນທຸລະກິດ, ຖອນທະບຽນວິສາຫະກິດ, ຖອນໃບອະນຸຍາດລົງທຶນ, ໃບອະນຸຍາດອື່ນ ຫຼື ຈະຖືກລົງໂທດຕາມກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

ກໍານົດເວລາຂອງການເລັ່ງທວງແຕ່ລະຄັ້ງ ແມ່ນ ສິບຫ້າວັນ ນັບແຕ່ວັນອອກໃບເລັ່ງທວງ ແລະ ສົ່ງໃຫ້ຜູ້ມອບອາກອນຊຶມໃຊ້ທີ່ຍັງຄ້າງມອບອາກອນຊຶມໃຊ້ ເປັນຕົ້ນໄປ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

### ມາດຕາ 39 ການປັບປຸງອັດຕາອາກອນຊຶມໃຊ້

ໃນກໍລະນີຈໍາເປັນ ແລະ ຮີບດ່ວນ ທີ່ຕ້ອງປັບປຸງອັດຕາອາກອນຊຶມໃຊ້ ເພື່ອໃຫ້ສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະນັ້ນ ລັດຖະບານ ມີ ສິດ ແລະ ໜ້າທີ່ ຄົ້ນຄວ້າ ແລ້ວສະເໜີຕໍ່ຄະນະປະຈໍາສະພາແຫ່ງຊາດ ເພື່ອພິຈາລະນານໍາສະເໜີຕໍ່ປະທານປະເທດ ອອກລັດຖະບັນຍັດປະກາດໃຊ້ເປັນການຊົ່ວຄາວ, ຫຼັງຈາກນັ້ນ ຄະນະປະຈໍາສະພາແຫ່ງຊາດ ຕ້ອງລາຍງານຕໍ່ກອງປະຊຸມສະພາແຫ່ງຊາດເພື່ອຕົກລົງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ບໍ່ມີສິດປັບປຸງອັດຕາອາກອນຊຶມໃຊ້.

### ມາດຕາ 40 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 41 ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ ໃນວັນທີ 1 ມັງກອນ 2020 ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້